ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະພາບອັດຕາແລກປ່ຽນເງິນຕາຂອງ ສປປ ລາວ

ໃນໄລຍະບໍ່ດົນມານີ້, ສະພາບອັດຕາແລກປ່ຽນເງິນກີບ ກັບເງິນຕາຕ່າງປະເທດ ໄດ້ມີການເໜັງຕີງ ສິ່ງຜົນກະທົບບາງດ້ານຕໍ່ການດຳເນີນທຸລະກິດ, ອັນໄດ້ເຮັດໃຫ້ພໍ່ຄ້າ-ຊາວຂາຍຈຳນວນໜຶ່ງ ພົບຄວາມຫຍຸ້ງຍາກ ແລະ ມີຄຳຄິດຄຳເຫັນທີ່ຫຼາກຫຼາຍເກີດຂຶ້ນໃນສັງຄົມ. ຕໍ່ບັນຫາດັ່ງກ່າວ ພວກເຮົາຄວນເຂົ້າໃຈເຖິງສາເຫດ ແລະ ຄວາມເປັນຈິງຂອງບັນຫາດັ່ງກ່າວ. ໃນປີ 2019, ສະພາບຕະຫຼາດເງິນຕາຢູ່ສາກົນ ເຫັນວ່າມີການຜັນຜວນຫຼາຍສົມຄວນໂດຍສະເພາະແມ່ນຄ່າເງິນໂດລາ (ສະຫະລັດ) ແລະ ເງິນບາດ. ໂດຍລວມແລ້ວໃນໄລຍະ 8 ເດືອນຂອງປີ 2019, ຄ່າເງິນໂດລາ (ສະຫະລັດ) ແຂງຄ່າ 1,5% ທຽບກັບເງິນເອີໂຣ ແລະ ເງິນບາດແຂງຄ່າຂຶ້ນ 3,50% ທຽບກັບເງິນໂດລາສະຫະລັດ.

ຈາກສະພາບການແຂງຄ່າຂອງເງິນໂດລາສະຫະລັດ ແລະ ເງິນບາດຢູ່ໃນຕະຫຼາດສາກົນຄືດັ່ງກ່າວນັ້ນ ໄດ້ສົ່ງຜົນກະທົບໃຫ້ຄ່າເງິນກີບທຽບກັບເງິນໂດລາສະຫະລັດ ແລະ ເງິນບາດອ່ອນຄ່າລົງຢ່າງຫຼີກລ້ຽງບໍ່ໄດ້ເນື່ອງຈາກປັດໄຈພື້ນຖານທີ່ສຳຄັນທາງດ້ານເສດຖະກິດຂອງປະເທດເຮົາຍັງບໍ່ທັນມີການຜະລິດສິນຄ້າພາຍໃນທີ່ເຂັ້ມແຂງ, ສ່ວນໃຫຍ່ໄດ້ເພິ່ງພາການນຳເຂົ້າສິນຄ້າຈາກຕ່າງປະເທດມາເປັນເວລາດົນນານ ໂດຍສະເພາະສິນຄ້າອຸປະໂພກ ແລະ ບໍລິໂພກລວມທັງສິນຄ້ານຳເຂົ້າ ແລະ ວັດຖຸດິບ ເພື່ອການລົງທຶນ ຊຶ່ງເຮັດໃຫ້ປະເທດເຮົາ ຍັງມີລັກສະນະຂາດດູນການຄ້າກັບຕ່າງປະເທດຢ່າງຕໍ່ເນື່ອງ. ຈາກສະພາບຄືດັ່ງກ່າວ ເຮັດໃຫ້ສັງຄົມເກີດມີຄວາມຕ້ອງການເງິນຕາຕ່າງປະເທດເພື່ອຊຳລະຄ່າການນຳເຂົ້າສິນຄ້າ ແລະ ບໍລິການໃນແຕ່ລະປີສູງກວ່າຄວາມສາມາດຕອບສະໜອງຂອງລະບົບເສດຖະກິດຂອງປະເທດເຮົາ. (ສຳລັບປັດໃຈທີ່ມີຜົນກະທົບຕໍ່ອັດຕາແລກປ່ຽນແມ່ນຈະນຳສະເໜີສະບັບຕໍ່ໄປ)

ຈາກບັນຫາການອ່ອນຄ່າຂອງເງິນກີບດັ່ງທີ່ກ່າວມານັ້ນ ມັນໄດ້ສົ່ງຜົນກະທົບຕໍ່ລາຄາສິນຄ້າ ແລະ ຊີວິດການເປັນຢູ່ຂອງປະຊາຊົນເຮົາໂດຍລວມ. ດັ່ງນັ້ນ, ເພື່ອປ້ອງກັນ ແລະ ຈຳກັດບໍ່ໃຫ້ມີຜົນກະທົບຮຸນແຮງ, ທະນາຄານແຫ່ງ ສປປ ລາວ ໄດ້ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດນະໂຍບາຍເງິນຕາເພື່ອຄວບຄຸມປະລິມານເງິນໃນຂອດຈໍລະຈອນໃຫ້ຢູ່ໃນລະດັບທີ່ເໝາະສົມກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ຈັດຕັ້ງປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ.

ເຖິງຢ່າງໃດກໍຕາມ, ເພື່ອຫຼຸດຜ່ອນຄວາມຕ້ອງການເງິນຕາຕ່າງປະເທດຂອງສັງຄົມ, ໃນຂະນະທີ່ແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດຂອງປະເທດເຮົາຍັງບໍ່ຫຼາຍ ຍ້ອນສະພາບການຂາດດຸນການຄ້າກັບຕ່າງປະເທດຢ່າງຕໍ່ເນື່ອງນັ້ນ, ມັນແມ່ນຄວາມຈໍາເປັນຢ່າງພາວະວິໄສໃຫ້ພວກເຮົາ ຕ້ອງມີການປະຢັດໃນການໃຊ້ຈ່າຍເງິນຕາຕ່າງປະເທດໃນສັງຄົມ. ພ້ອມກັນນີ້, ຂະແໜງການທີ່ກ່ຽວຂ້ອງຄວນຊຸກຍູ້ສົ່ງເສີມການລົງທຶນໃນຂະແໜງການເສດຖະກິດທີ່ເປັນທ່າແຮງດ້ານການສົ່ງອອກໃຫ້ຫຼາຍຂຶ້ນ ແລະ ສ້າງເງື່ອນໄຂທີ່ເອື້ອອໍານວຍກ່ວາເກົ່າ ເພື່ອດຶງດູດການລົງທຶນຂອງຕ່າງປະເທດລວມທັງປັບປ່ຽນພຶດຕິກໍາໃນການຊົມໃຊ້ສິນຄ້າ ແລະ ການບໍລິການພາຍໃນປະເທດໃຫ້ຫຼາຍຂຶ້ນ, ຈໍາກັດການນໍາເຂົ້າສິນຄ້າທີ່ບໍ່ຈໍາເປັນ ແລະ ຟຸມເຟືອຍ, ສົ່ງເສີມການທ່ອງທ່ຽວພາຍໃນປະເທດ ແລະ ດຶງດູດນັກທ່ອງທ່ຽວຕ່າງປະເທດເຂົ້າມາປະເທດເຮົາໃຫ້ຫຼາຍຂຶ້ນ, ຖ້າເຮັດໄດ້ຄືແນວນັ້ນ ຈະເຮັດໃຫ້ພວກເຮົາມີແຫຼ່ງເງິນຕາຕ່າງປະເທດ ເພື່ອຕອບສະໜອງຄວາມຕ້ອງການຂອງລະບົບເສດຖະກິດຂອງປະເທດເຮົາ ແລະ ຈະຮັບປະກັນໃຫ້ອັດຕາແລກປ່ຽນເງິນກີບທຽບກັບເງິນຕາຕ່າງປະເທດໝັ້ນທ່ຽງ.